ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 2173 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 21.9.2023.

# ແຈ້ງການ

ເຖິງ : - ຫ້ອງການກະຊວງ, ບັນດາກົມ, ສະຖາບັນ ແລະ ສູນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;
- ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້, ໂຮງຮຽນຊົນລະປະທານຊັ້ນສູງທ່າງ່ອນ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້;
- ບັນດາພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ຄັດເລືອກເອົາພະນັກງານ ເພື່ອສະໝັກທຶນການສຶກສາລະດັບປະລິນຍາຕີ, ທີ່ ປະເທດ ອິນເດຍ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມຈັດຕັ້ງ ແລະ ພະນັກງານ ສະບັບ ເລກທີ 1617/ກປ, ລົງວັນທີ 29 ທັນວາ 2021;
- ອີງຕາມ ຈົດໝາຍທາງການຈາກສະຖານທູດອິນເດຍ ປະຈຳ ສປປ ລາວ ສະບັບເລກທີ Vient/267/2023 ລົງວັນທີ 31 ກໍລະກົດ 2023;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ.

ກົມຈັດຕັ້ງ ແລະ ພະນັກງານ ຂໍຖືເປັນກຽດ ແຈ້ງມາຍັງທ່ານ ເພື່ອຄັດເລືອກພະນັກງານທີ່ມີເງື່ອນໄຂເໝາະສົມເຂົ້າຮ່ວມສະໝັກທຶນການສຶກສາໃນລະດັບປະລິນຍາຕີ (Post Graduate Diploma), ສາຂາວິຊາ ສົ່ງເສີມກະສິກຳ, ທີ່ສະຖາບັນການສົ່ງເສີມກະສິກຳແຫ່ງຊາດ ຂອງປະເທດອິນເດຍ.

<u>ເງື່ອນໄຂ ແລະ ວິທີການສະໝັກ:</u>

- ຜູ້ທີ່ຈະສະໝັກຕ້ອງເປັນພະນັກງານ-ລັດຖະກອນສົມບູນ 02 ປີຂຶ້ນໄປ ແລະ ມີຄວາມຮູ້ພາສາອັງກິດໃນລະດັບດີ ທັງພາກເວົ້າ, ຂຽນ, ຟັງ ແລະ ອ່ານ;
- ຜູ້ສະໝັກສາມາດເບິ່ງລາຍລະອຽດ ແລະ ສະໝັກແບບອອນລາຍໂດຍຜ່ານທາງເວັບໄຊ www.manage. gov.in ຫລື https://www. manage.gov.in/moocs/pgdaem-moocs.asp ກ່ອນວັນທີ 30 ກັນຍາ 2023.

ພາຍຫຼັງສະໝັກຜ່ານທາງເວັບໄຊ ແລ້ວໃຫ້ສຳເນົາ ສົ່ງໃຫ້ພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ, ກົມຈັດຕັ້ງ ແລະ ພະນັກງານ ເພື່ອເປັນຂໍ້ມູນ ແລະ ຕິດຕາມ, ສ່ວນລາຍລະອຽດເພີ່ມເຕີມແມ່ນໃຫ້ພົວພັນພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ, ກົມຈັດຕັ້ງ ແລະ ພະນັກງານ : ທ. ສົມເພັດອຸດອນ ດວງມາລາ ໂທ: 021 415368, 020 52879569.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

ຫົວໜ້າກົມ

ກະຊວງກະສິກຳ ແລະ ປ່າໄມ້ ກົມຈັດຕັ້ງແລະພະນັກງານ

ບຸນທະວີ ໄຊຍະເພັດ